ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 5146. /ກງ

ນະຄອນຫຼວງວຽງຈັນ, ວັນທີ 27 ທັນວາ 2019

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງແບບຟອມໃບຮັບເງິນຂອງຄັງເງິນແຫ່ງຊາດ ເພື່ອນຳໃຊ້ເປັນເອກະສານຢັ້ງຢືນໃນການມອບພັນທະເຂົ້າງົບປະມານແຫ່ງລັດ ຜ່ານລະບົບທະນາຄານ

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍຄັງເງິນແຫ່ງຊາດ ສະບັບເລກທີ 259/ນຍ, ລົງວັນທີ 1 ມິຖຸນາ 2010;
- ອີງຕາມ ບົດລາຍງານຂອງຄັງເງິນແຫ່ງຊາດ ສະບັບເລກທີ 6689/ຄງຊ, ລົງວັນທີ 24 ທັນວາ 2019.

ເພື່ອຮັບປະກັນການມອບລາຍຮັບງົບປະມານ ໃຫ້ລວມສູນຜ່ານລະບົບທະນາຄານ ດ້ວຍການນຳໃຊ້ໃບຮັບເງິນຂອງຄັງເງິນແຫ່ງຊາດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ, ທັງເປັນການຊຸກຍູ້, ສົ່ງເສີມ, ການນຳໃຊ້ເຄື່ອງທັນສະໄໝເຂົ້າໃນການຄຸ້ມຄອງເກັບລາຍຮັບເຂົ້າງົບປະມານແຫ່ງລັດ, ໃຫ້ມີຄວາມໂປ່ງໃສ, ຖືກຕ້ອງ ແລະ ທັນຕາມກຳນົດເວລາ.

### ລັດຖະມົນຕີກະຊວງການເງິນ ຕົກລົງ:

ມາດຕາ 01 : ເຫັນດີຮັບຮອງເອົາແບບຟອມໃບຮັບເງິນຂອງຄັງເງິນແຫ່ງຊາດ ເປັນເອກະສານຢັ້ງຢືນການມອບລາຍຮັບຜ່ານລະບົບທະນາຄານ, ຊຶ່ງມີຮູບແບບເຈ້ຍສະເພາະແບບຟອມ ແລະ ເນື້ອໃນ ໃບຮັບເງິນດັ່ງນີ້:

- ເຈ້ຍແບບພິມສະເພາະໃບຮັບເງິນ ຄວາມໜາ 75 ແກຣມ, ມີຂະໜາດເຈ້ຍ A5: 21 cm x 14,8 cm, ມີໂລໂກຄັງເງິນແຫ່ງຊາດ ສີຟ້າ ເປັນລາຍນ້ຳຢູ່ລະຫວ່າງກາງລາຍລາວ ຂະໜາດ 5,3 cm x 7 cm, ມີຕົວອັກສອນ ຄງຊ ສີດຳ ຂະໜາດ 9 pt ເປັນລາຍນ້ຳ ແລະ ຄວາມສະຫຼຽງ 45 ອົງສາ.
- ເນື້ອໃນ ແລະ ຂໍ້ມູນ ທີ່ບັນທຶກຢູ່ໃບຮັບເງິນ : [ 1 ] ກະຊວງການເງິນ / Ministry of Finance, [ 2 ] ຄັງເງິນແຫ່ງຊາດ / National Treasury, [ 3 ] ເລກທີ / No, [ 4 ] ວັນທີ / Date, [ 5 ] ໃບຮັບເງິນ / Receipt, [ 6 ] ໄດ້ຮັບເງິນຈາກ / Receive from, [ 7 ] ມອບເຂົ້າບັນຊີ / Given Account ແລະ ເລກບັນຊີ / Account number, [ 8 ] ເລກລຳດັບ / No, [ 9 ] ເນື້ອໃນລາຍຮັບ / Description, [ 10 ] ຈຳນວນເງິນ / Amount, [ 11 ] ສະກຸນເງິນ / Currency, [ 12 ] ຈຳນວນເງິນທັງໝົດ / Total, [ 13 ] ຈຳນວນເງິນເປັນຕົວໜັງສື / Amount in word, [ 14 ] ເຄື່ອງໝາຍ QR Code, [ 15 ] ຜູ້ຮັບເງິນ / Recipient ແລະ [ 16 ] ດ້ານຫຼັງຂໍ້ແນະນຳ ແລະ ເນື້ອໃນ 03 ຂໍ້.

ມາດຕາ 02 : ເຫັນດີນຳໃຊ້ໃບຮັບເງິນຂອງຄັງເງິນແຫ່ງຊາດ ເປັນເອກະສານຢັ້ງຢືນການມອບລາຍຮັບເຂົ້າງົບປະມານແຫ່ງລັດ ຜ່ານລະບົບທະນາຄານ, ເລີ່ມນຳໃຊ້ຕັ້ງແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນໄປ.

ມາດຕາ 03 : ມອບໃຫ້ຄັງເງິນແຫ່ງຊາດ ເປັນຜູ້ຈັດຕັ້ງປະຕິບັດໃນການຈັດພິມເຈ້ຍແບບພິມສະເພາະ ເພື່ອໃຊ້ໃນການພິມໃບຮັບເງິນຂອງຄັງເງິນແຫ່ງຊາດ ຜ່ານລະບົບທະນາຄານ.

ມາດຕາ 04 : ມອບໃຫ້ຄັງເງິນແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 05 : ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງການເງິນ

ກະຊວງການເງິນ

ສົມດີ ດວງດີ